# ຄວາມສຳເລັດດ້ານການນຳພາວຽກຂອງແມ່ຍິງ

THE WORLD BANK
IBRD • IDA | WORLD BANK GROUP

Empower

## 1 ຜົນສຳເລັດຂອງການເປັນນາຍບ້ານເພດຍິງ

ນາງ ວິພາກອນ, ອາຍຸ 35 ປີ ອາຊີບຫຼັກແມ່ນເຮັດສວນກາເຟ ແລະ ເຮັດນາ ຢູ່ບ້ານດາກບອງ ເມືອງດາກຈຶງ ແຂວງເຊກອງ. ລາວເປັນຊົນເຜົ່າຕຣາງ ແລະ ເປັນນາຍບ້ານຄົນໜຶ່ງທີ່ເປັນເພດຍິງໃນຈຳນວນບ້ານເປົ້າໝາຍຂອງໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ໃນບ້ານຊຸດທີ-1 ໃນນີ້ມີພຽງ 4 ບ້ານເທົ່ານັ້ນທີ່ແມ່ຍິງໄດ້ເປັນນາຍບ້ານ ຈາກ ຈ/ນ 230 ບ້ານຂອງໂຄງການ ປຊກ ຊຶ່ງມີຈຳນວນໜ້ອຍພໍສົມຄວນ ຄ້າຍຄືກັນກັບຢູ່ເມືອງ ແລະ ແຂວງອື່ນໆ ໃນທົ່ວ ສປປ ລາວ. ນາງ ວິພາກອນ ໄດ້ຮັບການເລືອກຕັ້ງເປັນນາຍບ້ານ ຕັ້ງແຕ່ປີ 2023 ເປັນຕົ້ນມາ. ໃນປີ 2024-2025 ໂຄງການ ປຊກ ໄດ້ດຳເນີນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການໃນບ້ານເປົ້າໝາຍຊຸດທີ-1 ແລະ ເນັ້ນໜັກໃຫ້ຄວາມສຳຄັນຕໍ່ການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ ໂດຍໄດ້ສະໜອງການຝຶກອົບຮົມດ້ານການເປັນຜູ້ນຳຂັ້ນຮາກຖານເພື່ອການພັດທະນາໂດຍຊຸມຊົນເປັນເຈົ້າການ ໃຫ້ແກ່ອົງການຈັດຕັ້ງບ້ານ ໂດຍສະເພາະແມ່ນຜູ້ທີ່ມີໜ້າທີ່ຮັບຜິດຊອບນຳພາວຽກງານຂອງໂຄງການ ປຊກ ດັ່ງກ່າວ.







ນາງ ວິພາກອນ ໄດ້ເລົ່າກ່ຽວກັບຄວາມເປັນມາຂອງລາວ ວ່າ: "ນີ້ເປັນເທື່ອທຳອິດຂອງຂ້າພະເຈົ້າທີ່ໄດ້ຮັບການເລືອກຕັ້ງເປັນນາຍບ້ານ ແລະ ຍັງຢູ່ໃນສະໄໝທຳອິດ ເພາະຜ່ານມາກໍເປັນປະຊາຊົນທຳມະດາຂອງບ້ານ, ບໍ່ໄດ້ຜ່ານການເປັນຮອງນາຍບ້ານ ຫຼື ຄະນະບ້ານ ແລະ ບໍ່ເຄີຍຄາດຄິດມາກ່ອນ". ລາວແມ່ນຄົນທີສອງຂອງບ້ານທີ່ໄດ້ແມ່ຍິງເປັນນາຍບ້ານ ຕໍ່ຈາກຄົນກ່ອນ ແລະ ຖືວ່າຍັງໜຸ່ມກວ່າ ຖ້າຫາກທຽບໃສ່ອາຍຸຂອງຜູ້ທີ່ເຮັດໜ້າທີ່ເປັນນາຍບ້ານຄົນກ່ອນໆ ຜ່ານມາ, ລາວເລົ່າຕື່ມວ່າ: "ການເຮັດໜ້າທີ່ເປັນນາຍບ້ານໃນຕອນແລກເລີ່ມ ກໍບໍ່ຮູ້ວ່າຈະເຮັດຄືແນວໃດ, ກໍໄດ້ຖາມ, ຮຽນຮູ້ນຳຄົນກ່ອນນັ້ນ ແລະ ໄດ້ຮັບການອົບຮົມວຽກປົກຄອງລະບົບ 45 ວັນນຳຂັ້ນເທິງ ແລະ ຜ່ານການເຮັດວຽກຕົວຈິງ ກໍຄ່ອຍໆປັບປຸງດີຂຶ້ນ".

ພາຍຫຼັງລາວ ໄດ້ຮັບການຝຶກອົບຮົມ ດ້ານການເປັນຜູ້ນຳຂັ້ນຮາກຖານ ຈາກໂຄງການ ປຊກ ແລ້ວ, ລາວໃຫ້ຄຳເຫັນວ່າ: "ໂອ້ ! ເປັນປະໂຫຍດຫຼາຍ ເພາະເພີ່ມຝຶກເລື່ອງເຮົາວາງໂຕແນວໃດ, ການເວົ້າ-ການວ່າ, ຝຶກການວາງແຜນວຽກ, ການຄຸ້ມຄອງ-ນຳພາ ຖືວ່າເຂົ້າໃຈແບບແຜນການນຳພາຕໍ່ປະຊາຊົນໃນການພັດທະນາບ້ານຫຼາຍຂຶ້ນ ໂດຍສະເພາະແມ່ນການມີສ່ວນຮ່ວມຂອງກຸ່ມແມ່ຍິງໃນບ້ານເຮົາ".

ແນວໃດກໍຕາມ, ການເຮັດໜ້າທີ່ເປັນນາຍບ້ານ ແລະ ການນຳພາການຈັດຕັ້ງປະຕິບັດວຽກງານໂຄງການ ປຊກ ຂອງ ນາງ ວິພາກອນ, ລາວກໍໄດ້ເລົ່າຕື່ມອີກວ່າ: "ບ້ານຂອງພວກເຮົາ ກໍພົບຄວາມຫຍຸ້ງຍາກບາງຢ່າງ ເຊັ່ນ: ການກໍ່ສ້າງເຮືອນໂພຊະນາການຖືກຊ່ວງລະດູຝົນ ເຮັດໃຫ້ວຽກບໍ່ແລ້ວຕາມກຳນົດເວລາ ແຕ່ສຸດທ້າຍກໍສາມາດແກ້ໄຂສຳເລັດ ແລະ ເປີດນຳໃຊ້ແລ້ວ".

ບ້ານດາກບອງ ສຳລັບຜູ້ອຳນວຍຄວາມສະດວກບ້ານ ກໍແມ່ນແມ່ຍິງເຊັ່ນກັນ, ນາຍບ້ານ ກໍໄດ້ເອົາໃຈໃສ່ຊີ້ນຳ ແລະ ກະຕຸ້ນໃຫ້ກຳລັງໃຈລາວ "ເຮົາກໍໄດ້ແນະນຳລາວວ່າ ການສື່ສານອັນໃດບໍ່ແນ່ໃຈ/ບໍ່ເຂົ້າໃຈຄັກ ກໍໃຫ້ຖາມນຳພະນັກງານໂຄງການ ແລະ ຮຽນຮູ້ນຳເຂົາເຈົ້າຕື່ມ, ຖ້າວຽກສຳເລັດ ກໍແມ່ນຜົນງານຂອງພວກເຮົາ".

ວິພາກອນ ຍັງໄດ້ຖອດຖອນບົດຮຽນຂອງຕົນຝາກເຖິງແມ່ຍິງຢູ່ບ້ານອື່ນໆ ວ່າ: "ຕົນເອງເປັນນາຍບ້ານຄົນໜຶ່ງທີ່ເປັນແມ່ຍິງ ກໍຢາກໃຫ້ແມ່ຍິງຢູ່ບ້ານອື່ນໆ ໄດ້ເປັນນາຍບ້ານຄືກັນຫຼາຍຂຶ້ນ, ກ້າສະແດງອອກຕໍ່ການມີສ່ວນຮ່ວມເຂົ້າໃນການພັດທະນາບ້ານ ແລະ ເຮົາຄວນໃຫ້ໂອກາດສ້າງແມ່ຍິງທີ່ຍັງໜຸ່ມນ້ອຍ ໃຫ້ສາມາດສືບທອດເຮັດໜ້າທີ່ເປັນນາຍບ້ານຕໍ່ໄປໃນວັນຂ້າງໜ້າໄດ້".

## ຜົນສຳເລັດຂອງການເປັນຜູ້ອຳນວຍຄວາມສະດວກບ້ານເພດຍິງ

### *"ຂ້ອຍໝັ້ນໃຈຕົນເອງ & ກ້າສະແດງອອກ ຍ້ອນຂ້ອຍຮຽນຮູ້ ແລະ ໝັ່ນຝຶກຝົນ"*

ນາງ ຄອນສະຫວັນ, ອາຍຸ 24 ປີ ຢູ່ບ້ານແຄວິງ ເມືອງເຊໂປນ ແຂວງສະຫວັນນະເຂດ ເປັນຊົນເຜົ່າຕຣີ. ລາວແຕ່ງງານແລ້ວ ແລະ ມີລູກ 1 ຄົນ , ອາຊີບຫຼັກແມ່ນເຮັດນາ ແລະ ເຮັດສວນ. ກ່ອນໜ້ານີ້ ລາວເຄີຍເຮັດໜ້າທີ່ເປັນອາສາສະໝັກສາທາລະນະສຸກບ້ານ (ອສບ).

ເມື່ອບ້ານແຄວິງ ໄດ້ຖືກຄັດເລື່ອກເປັນບ້ານເປົ້າໝາຍຂອງໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ໃນຊຸດທີ 1 (ປີ 2024-2025), ບ້ານໄດ້ຈັດຕັ້ງກຸ່ມຕ່າງໆຂຶ້ນ ເຊັ່ນ: ກຸ່ມຊ່ວຍເຫຼືອກັນ ແລະ ກຸ່ມໂພຊະນາການຊຸມຊົນ ພ້ອມທັງຄັດເລືອກເອົາຜູ້ອຳນວຍຄວາມສະດວກຂອງບ້ານ. ນາງ ຄອນສະຫວັນ ໄດ້ຮັບການຄັດເລືອກ ແລະ ແຕ່ງຕັ້ງໃຫ້ຮັບໜ້າທີ່ນີ້ ພ້ອມທັງໄດ້ເຂົ້າຮ່ວມການຝຶກອົບຮົມ ກ່ຽວກັບ ການເປັນຜູ້ນຳຂັ້ນຮາກຖານເພື່ອການພັດທະນາໂດຍຊຸມຊົນເປັນເຈົ້າການ ທີ່ໂຄງການ ປຊກ ໄດ້ສະໜອງໃຫ້. ໃນໜ້າທີ່ນີ້ ລາວເປັນຜູ້ປະສານງານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຈັດຕັ້ງປະຕິບັດວຽກງານຂອງໂຄງການຢູ່ໃນບ້ານ ໂດຍສະເພາະແມ່ນວຽກປັບປຸງຊີວິດການເປັນຢູ່ ກິດຈະກຳຂອງກຸ່ມຊ່ວຍເຫຼືອກັນ ແລະ ວຽກສົ່ງເສີມໂພຊະນາການຊຸມຊົນບ້ານ ເຫຼົ່ານີ້ເປັນຕົ້ນ.



ມ. ຄອນສະຫວັນ ຂຶ້ນລາຍງານຜົນການຈັດຕັ້ງປະຕິບັດວຽກງານໂຄງການ ປຊກ ໃນຊ່ວງປະເມີນຜົນກາງສະໄໝ

ນາງ ຄອນສະຫວັນ ເລົ່າວ່າ: *"ກ່ອນບໍ່ທັນໄດ້ຮັບການຝຶກອົບຮົມ ດ້ານການເປັນຜູ້ນຳນີ້ ນ້ອງຮູ້ສຶກອາຍ ບໍ່ກ້າເວົ້າ ບໍ່ກ້າວ່າ ແລະ ຍັງບໍ່ທັນເຂົ້າໃຈວຽກທີ່ບ້ານມອບໝາຍໃຫ້ເທົ່າທີ່ຄວນ. ແຕ່ຫຼັງຈາກເຂົ້າຝຶກອົບຮົມແລ້ວ ນ້ອງຮູ້ສຶກໝັ້ນໃຈຂຶ້ນ ກ້າສະແດງອອກ ແລະ ກ້າເວົ້າຫຼາຍຂຶ້ນ." ລາວກ່າວຕື່ມວ່າ: "ການຝຶກອົບຮົມນີ້ ເປັນປະໂຫຍດຫຼາຍ ເພາະເຮັດໃຫ້ນ້ອງ ມີຄວາມຮູ້ ແລະ ຄວາມສາມາດ ກ່ຽວກັບແບບແຜນການເຮັດວຽກ ພ້ອມທັງໄດ້ຮຽນຮູ້ ແລະ ຝຶກຝົນ ຈາກການເຮັດວຽກຕົວຈິງ ຈຶ່ງເຮັດໃຫ້ນ້ອງໝັ້ນໃຈຫຼາຍຂຶ້ນກວ່າເກົ່າ"*.

ໃນຕອນເລີ່ມຕົ້ນ ການເຮັດໜ້າທີ່ນີ້ ກໍມີສິ່ງທ້າທາຍຢູ່, ນາງ ຄອນສະຫວັນ ເລົ່າຕໍ່ໄປວ່າ: ການເຕົ້າໂຮມກຸ່ມຕ່າງໆ ຂອງບ້ານ ມາປະຊຸມ ເບື້ອງຕົ້ນແມ່ນພົບຄວາມຫຍຸ້ງຍາກພໍສົມຄວນ ຍ້ອນຫຼາຍຄົນເຫັນວ່າ ລາວເປັນແມ່ຍິງທີ່ຍັງໜຸ່ມນ້ອຍ ຈຶ່ງບໍ່ຄ່ອຍໃຫ້ຄວາມສຳຄັນ, ແຕ່ລາວເອງກໍບໍ່ໄດ້ທໍ້ຖອຍແຕ່ຢ່າງໃດ ແລະ ຄ່ອຍໆ ສາມາດລະດົມການມີສ່ວນຮ່ວມຂອງກຸ່ມຕ່າງໆໄດ້ ເຊັ່ນ: ຍ້ອນການປະສານຂອງລາວໄດ້ດີ ຈຶ່ງເຮັດໃຫ້ກິດຈະກຳຂອງກຸ່ມຊ່ວຍເຫຼືອກັນ ແລະ ກຸ່ມໂພຊະນາການຂອງບ້ານ ໄດ້ຖືກຈັດຕັ້ງປະຕິບັດ ຈົນສຳເລັດຜົນຕາມແຜນການທີ່ກຳນົດໄວ້.

ນາງ ຄອນສະຫວັນ ຝາກຄວາມເຖິງແມ່ຍິງຢູ່ບ້ານອື່ນໆ ວ່າ: *"ຖ້ານ້ອງເຮັດໄດ້ ແມ່ຍິງຄົນອື່ນຄົງກໍເຮັດໄດ້ຄືກັນ ຂໍພຽງແຕ່ກ້າຮັບໜ້າທີ່ ກ້າເຂົ້າຮ່ວມ ກ້າຮຽນຮູ້ ແລະ ໝັ່ນຝຶກຝົນ ກໍບໍ່ເໜືອຄວາມພະຍາຍາມ."*

***"ຝຶກຝົນໄວ້ວັນນີ້ ກໍສາມາດເປັນຜູ້ສືບທອດທີ່ດີໄດ້ໃນວັນໜ້າ"***

ນາງ ເບົາ, ອາຍຸໄດ້ 23 ປີ, ຢູ່ບ້ານຫ້ວຍຍາມ ເມືອງຊ່ອນ ແຂວງຫົວພັນ ເປັນຊົນເຜົ່າມົ້ງ. ລາວແຕ່ງງານແລ້ວ ກັບ ທ້າວ. ຕົງກູ ແລະ ມີລູກ 1 ຄົນ (ຊາຍ), ອາຊີບຕົ້ນຕໍຂອງເຂົາເຈົ້າແມ່ນເຮັດໄຮ່ເຂົ້າ ແລະ ສວນກາເຟ. ຄອບຄົວ ນ. ເບົາ ກໍເປັນສະມາຊິກກຸ່ມໂພຊະນາການຊຸມຊົນຂອງບ້ານຫ້ວຍຍາມ ຊຶ່ງເປັນບ້ານເປົ້າໝາຍຂອງໂຄງການ ປຊກ ໃນຊຸດທີ-1 (2024-2025), ລາວໄດ້ເຂົ້າຮ່ວມການຝຶກອົບຮົມກ່ຽວກັບວຽກໂພຊະນາການ ເຊັ່ນ: ວິທີການແຕ່ງອາຫານສຳລັບຄອບຄົວ 1,000 ວັນ, ການເຮັດສວນຄົວຊະນາການ ແລະ ລາວທັງໄດ້ເຂົ້າຮ່ວມຮັບການຝຶກອົບຮົມ ດ້ານການຈັດຕັ້ງປະຕິບັດກອບວຽກສິ່ງແວດລ້ອມ - ສັງຄົມ ແລະ ດ້ານບົດບາດຍິງ-ຊາຍ ຢູ່ຂັ້ນບ້ານ.

ນາງ ເບົາ ເລົ່າກ່ຽວກັບໂພຊະນາການໃຫ້ຟັງວ່າ: *"ຕັ້ງແຕ່ຕອນນ້ອງຍັງບໍ່ທັນໄດ້ແຕ່ງງານ ນ້ອງກໍບໍ່ທັນຮູ້ວ່າ ໂພຊະນາການແມ່ນຫຍັງ ຄືກັບຄົນອື່ນໆ. ແຕ່ຫຼັງຈາກນ້ອງແຕ່ງງານແລ້ວ ແລະ ຖືພາໃໝ່ໆ ນ້ອງກໍໄດ້ເຂົ້າເປັນສະມາຊິກກຸ່ມໂພຊະນາການຂອງບ້ານນຳເພິ່ນ ແລະ ໄດ້ໄປເຂົ້າຝຶກອົບຮົມຮຽນນຳເພິ່ນ ກ່ຽວກັບການເຮັດອາຫານແຕ່ງກິນໃຫ້ລູກນ້ອຍ/ເດັກອ່ອນ ທັງການເຮັດສວນຄົວໂພຊະນາການນຳ"*

**ຂະບວນການແຕ່ງອາຫານ ສຳລັບຄອບຄົວ 1,000 ວັນ ແລະ ການເຄື່ອນໄຫວດ້ານບົດບາດຍິງ-ຊາຍ (ນ. ເບົາ ກໍແມ່ນໜຶ່ງໃນນັ້ນ)**






ນາງ ເບົາ ເລົ່າຕໍ່ຕື່ມວ່າ: *"ຫຼັງຈາກນ້ອງທີ່ໄດ້ໄປຮຽນນຳເພິ່ນ ຈຶ່ງໄດ້ຮູ້ວ່າ ອາຫານທີ່ມີໂພຊະນາການແມ່ນແນວໃດ ແລະ ເປັນໂອກາດດີ ເປັນປະໂຫຍດກັບນ້ອງທີ່ຕ້ອງຮຽນຮູ້ ແລະ ກຽມຕົວໄວ້ສຳລັບວິທີການລ້ຽງລູກ ຫຼື ໃຫ້ອາຫານລູກນ້ອຍ ຕາມບົດຮຽນທີ່ເພິ່ນຝຶກໃຫ້ມາ ເຊັ່ນ: ຫຼັງຈາກນ້ອງເກີດລູກແລ້ວ, ແຕ່ມື້ທຳອິດ ຫາຄົບ 6 ເດືອນ ນ້ອງກໍໃຫ້ລູກກິນແຕ່ນ້ຳນົມເຮົາ. ຫຼັງລູກເຮົາຄົບ 6 ເດືອນແລ້ວ ນ້ອງກໍໄດ້ເຮັດ ແລະ ແຕ່ງອາຫານໃຫ້ລູກກິນເສີມ ຕາມສູດອາຫານທີ່ເພິ່ນຝຶກໃຫ້ເຮົາ ແລະ ລູກເຮົາກໍແຂງແຮງດີ ແລະ ນ້ອງສາມາດບອກວິທີເຮັດອາຫານຄືດຽວລ້ຽງລູກນ້ອຍໃຫ້ຄອບຄົວອື່ນຕໍ່ໄປໄດ້, ທັງການເຮັດສວນຄົວວ່າ ຄວນປູກພືດຜັກຫຍັງແດ່"*. ນອກຈາກນີ້, ນ. ເບົາ ຍັງເລົ່າກ່ຽວກັບການເຮັດໜ້າດ້ານບົດບາດຍິງ-ຊາຍ ລະຫວ່າງ ລາວເອງກັບຜົວຂອງລາວວ່າ: *"ເມື່ອນ້ອງແຕ່ງງານກັບລາວແລ້ວ ລາວກໍຊ່ວຍນ້ອງ ເຊັ່ນ: ເຮັດວຽກເຮືອນ, ແຕ່ງກິນ ແລະ ເອົາລູກຊ່ວຍກັນ ຍາມນ້ອງເຂົ້າຮ່ວມອົບຮົມ ລາວໄປສົ່ງນ້ອງ ແລະ ເອົາ ລູກຖ້າ"*.

ສ່ວນ ທ້າວ ຕົງກູ ຜົວຂອງ ນາງ ເບົາ ກໍໄດ້ເລົ່າກ່ຽວກັບອາຫານທີ່ມີໂພຊະນາການ ແລະ ການເຮັດໜ້າທີ່ພາລະບົດບາດຍິງ-ຊາຍ ລະຫວ່າງລາວເອງກັບເມຍຂອງລາວວ່າ *"ເຮົາແຕ່ງງານສ້າງຄອບຄົວໃໝ່ ແລະ ເມຍຂອງເຮົາກໍໄດ້ເປັນສະມາຊິກຂອງກຸ່ມໂພຊະນາການບ້ານ ເປັນໂອກາດດີ ແລະ ເປັນປະໂຫຍດຫຼາຍທີ່ເມຍເຮົາໄດ້ຮຽນຮູ້ວິທີການເຮັດອາຫານລ້ຽງລູກນ້ອຍໃຫ້ຖືກຕາມຫຼັກໂພຊະນາການນຳເພິ່ນ ແລະ ເມຍເຮົາກໍມາສອນ ຫຼື ແນະນຳໃຫ້ເຮົາຮູ້ວິທີການແຕ່ງອາຫານໃຫ້ລູກນ້ອຍເຮົາກິນເຊັ່ນກັນ ແລະ ເຮົາກໍສາມາດຊ່ວຍເມຍເຮົາໄດ້"*.
ທ້າວ ຕົງກູ ຍັງໄດ້ຝາກຄວາມເຖິງໝູ່ເພື່ອນຍິງ-ຊາຍຄົນອື່ນໆວ່າ: *"ຖ້າຫາກຄູ່ຮັກບ່າວ-ສາວໃດ ມີແຜນທີ່ຈະແຕ່ງງານກັນ ກໍໃຫ້ຮຽນຮູ້ໄວ້ກ່ຽວກັບການເຮັດອາຫານລ້ຽງລູກນ້ອຍໃຫ້ຖືກຕາມຫຼັກໂພຊະນາຄືເພິ່ນ ແລະ ຜົວ-ເມຍ ຄວນຊ່ວຍເຫຼືອກັນແບ່ງເບົາພາລະເບິ່ງລູກ"*.

ນາງ ວັນນະລີ (38 ປີ) ຢູ່ບ້ານມົ່ງເຈົ່າ ເມືອງຜົ້ງສາລີ ແຂວງຜົ້ງສາລີ. ລາວເປັນຊົນເຜົ່າຜູ້ນ້ອຍ ອາຊີບຫຼັກແມ່ນເຮັດສວນຊາ, ພ້ອມດຽວກັນ ລາວກໍຍັງເປັນປະທານຄະນະກຳມະການບໍລິຫານຄຸ້ມຄອງກອງທຶນກຸ່ມຊ່ວຍເຫຼືອກັນ (ຄບກ) ຂອງບ້ານ ຊຶ່ງບ້ານມົ່ງເຈົ່າ ກໍເປັນບ້ານເປົ້າໝາຍໜຶ່ງຂອງໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ໃນຊຸດທີ-1 (2024-2025) ຜ່ານມາ. ໂຄງການ ປຊກ ໄດ້ສ້າງຕັ້ງກຸ່ມຊ່ວຍກັນ (ກຊກ) ໃນບ້ານມົ່ງເຈົ່າຂຶ້ນ ປະກອບມີ 4 ກຸ່ມ, ລວມສະມາຊິກມີທັງໝົດ 60 ຄົນ (ຍິງ 100%). ຄຽງຄູ່ກັນນີ້, ເພື່ອຄຸ້ມຄອງການດຳເນີນກິດຈະກຳຂອງ ກຊກ ໃຫ້ມີປະສິດທິຜົນ, ໂຄງການ ປຊກ ໄດ້ສ້າງຕັ້ງຄະນະກຳມະການບໍລິຫານຄຸ້ມຄອງກອງທຶນກຸ່ມຊ່ວຍເຫຼືອກັນ (ຄບກ) ຂອງບ້ານຂຶ້ນ ຊຶ່ງ ນາງ ວັນນະລີ ໄດ້ຖືກເລືອກຕັ້ງໃຫ້ເຮັດໜ້າທີ່ເປັນປະທານ ຄບກ ຈາກສຽງສ່ວນໃຫຍ່ຂອງສະມາຊິກກຸ່ມ ແລະ ຄະນະດັ່ງກ່າວ ກໍໄດ້ຮັບການຝຶກອົບຮົມດ້ານການຄຸ້ມຄອງກອງທຶນເປັນການສະເພາະ ຕາມຫຼັກວິຊາການໆຄຸ້ມຄອງການເງິນຈຸນລະພາກ, ລວມທັງໄດ້ຮັບການຝຶກອົບຮົມດ້ານການເປັນຜູ້ນຳຂັ້ນຮາກຖານເພື່ອການພັດທະນາໂດຍຊຸມຊົນເປັນເຈົ້າການ ຊຶ່ງເຮັດໃຫ້ລະດັບຂີດຄວາມສາມາດດ້ານການນຳພາວຽກງານຂອງເຂົາເຈົ້າໃຫ້ສູງຂຶ້ນ ໂດຍສະເພາະໃນຂອບເຂດຄວາມຮັບຜິດຊອບ ກໍຄືການຄຸ້ມຄອງກອງທຶນກຸ່ມຊ່ວຍເຫຼືອກັນຂອງບ້ານ.

ນາງ ວັນນະລີ ໄດ້ເລົ່າຕໍ່ການເຮັດໜ້າທີ່ເປັນປະທານ ຄບກ ຂອງລາວວ່າ: "*ຫຼັງຈາກເຮົາໄດ້ຮັບເລືອກຕັ້ງໃຫ້ເປັນປະທານ ຄບກ ແລ້ວ, ເຮົາກໍໄດ້ເຮັດພາລະບົດບາດນຳພາວຽກງານຂອງກຸ່ມຊ່ວຍເຫຼືອກັນຂອງບ້ານມົ່ງເຈົ່າຂອງເຮົາ ຕາມແຜນກິດຈະກຳຂອງແຕ່ລະກຸ່ມ ໂດຍສະເພາະແມ່ນການນຳໃຊ້ເງິນຕົ້ນທຶນຂອງກຸ່ມທີ່ໄດ້ຮັບການຊ່ວຍເຫຼືອຈາກໂຄງການ ປຊກ ເຂົ້າໃນການລ້ຽງສັດ, ລວມທັງການທ້ອນເງິນ-ຝາກເງິນຂອງກຸ່ມ*"



ກອງປະຊຸມປະຈຳເດືອນຂອງກຸ່ມຊ່ວຍເຫຼືອກັນ ບ. ມົ່ງເຈົ່າ

ນາງ ວັນນະລີ ເລົ່າຕໍ່ໄປວ່າ: "*ໃນການເຮັດໜ້າທີ່ເປັນປະທານ ຄບກ ນີ້, ເຮົາກໍໄດ້ໃຊ້ຄວາມຮູ້ຄວາມສາມາດທີ່ໄດ້ຮຽນຝຶກອົບຮົມນຳໂຄງການມາເຊັ່ນ: ການເປັນຜູ້ນຳຊຸມຊົນ, ແບບແຜນວິທີເຮັດວຽກ ແລະ ການຄຸ້ມຄອງກອງທຶນ ຂອງກຸ່ມຊ່ວຍເຫຼືອກັນ. ໃນແຕ່ລະເດືອນ ພວກເຮົາໄດ້ຈັດປະຊຸມກັນເພື່ອຕິດຕາມ ແລະ ສະຫຼຸບກ່ຽວກັບການຝາກເງິນຂອງກຸ່ມ, ສະພາບການລ້ຽງສັດຂອງກຸ່ມ, ມີການປຶກສາຫາລືກັນເມື່ອມີບັນຫາ ແລະ ຫາທາງອອກແກ້ໄຂຮ່ວມກັນ ເຊັ່ນ: ມີບາງຄອບຄົວສະມາຊິກກຸ່ມເຈັບເປັນ ພວກເຮົາກໍມີນະໂຍບາຍຊ່ວຍກັນ ງົດຈ່າຍດອກເບ້ຍ 3 ເດືອນ. ມາຮອດດຽວນີ້, ເຮົາກໍຍັງນຳພາກຸ່ມເຄື່ອນໄຫວເປັນປົກກະຕິ, ຈຳນວນເງິນຝາກຂອງກຸ່ມກໍເພີ່ມຂຶ້ນ ແລະ ຈະສືບຕໍ່ຈົນກວ່າຈະມີການປ່ຽນແປງ. ຈຸດພິເສດຂອງບ້ານເຮົາແມ່ນລົມກັນງ່າຍ ແລະ ມີຄວາມສາມັກຄີ ໂດຍສະເພາະກຸ່ມແມ່ຍິງ ກໍຄືບັນດາສະຊິກກຸ່ມຊ່ວຍເຫຼືອກັນ*".

ນອກຈາກນີ້, ລາວຍັງໄດ້ເລົ່າຕື່ມ ແລະ ຝາກຄວາມຕໍ່ແມ່ຍິງໄປບ້ານອື່ນໆວ່າ: "*ສ່ວນຫຼາຍແມ່ຍິງຂອງພວກເຮົາແມ່ນບໍ່ກ້າສະແດງອອກ ບໍ່ກ້າອອກຄຳຄິດຄຳເຫັນໃນກອງປະຊຸມວຽກລວມຂອງບ້ານ, ຄືເຮົາເອງຜ່ານມາກໍເຄີຍເປັນຫົວໜ້າໜ່ວຍຂອງບ້ານມາກ່ອນ ແລະ ກ້າອອກຄຳເຫັນຕໍ່ວຽກລວມຂອງບ້ານເມື່ອມີປະຊຸມ. ຕໍ່ມາປະຊາຊົນສ່ວນໃຫຍ່ຢູ່ໃນບ້ານເຫັນເຮົາກ້າຫານຄືຕໍ່ວຽກລວມແນວນັ້ນ, ຈຶ່ງເຊື່ອໝັ້ນ ແລະ ໄວ້ວາງໃຈ ຈົນຖືກເລືອກໃຫ້ເຮັດໜ້າທີ່ເປັນປະທານ ຄບກ ຂອງບ້ານ ຄືດັ່ງປັດຈຸບັນ ໂດຍສະໝັກໃຈ ແລະ ເສຍສະຫຼະວຽກສ່ວນຕົວບາງເວລາ*".